## ພະຍາດຕັບອັກເສບ B ແມ່ນຫຍັງ?

ພະຍາດຕັບອັກເສບ B ແມ່ນເຊື້ອໄວຣັສທີ່ທຳຮ້າຍຕັບ. ຖ້າລະເລີຍໂດຍບໍ່ໄດ້ຮັບການປິ່ນປົວ, ສາມາດນຳໄປສູ່ຄວາມລົ້ມເຫຼວຂອງຕັບ ແລະ ເປັນມະເຮັງ.

ປະມານ 296 ລ້ານຄົນໃນທົ່ວໂລກກຳລັງຢູ່ກັບການເປັນພະຍາດຕັບອັກເສບ B. ແຕ່ຫຼາຍຄົນບໍ່ຮູ້ວ່າເຂົາເຈົ້າຕິດເຊື້ອເພາະບໍ່ຮູ້ສຶກ ຫຼື ບໍ່ສະແດງອາການທີ່ບໍ່ສະບາຍ.

ພະຍາດໄວຣັດຕັບອັກເສບ B ແຜ່ລາມສິ່ງຈາກຄົນສູ່ຄົນໂດຍການສຳຜັດກັບເລືອດ ຫຼື ຂອງແຫຼວໃນຮ່າງກາຍທີ່ຕິດເຊື້ອ.

## ພະຍາດຕັບອັກເສບ B ແລະ ການຖືພາ

ຖ້າທ່ານຖືພາ, ທ່ານຄວນໄປກວດເລືອດເພື່ອກວດຫາໂຣກຕັບອັກເສບ B ເຊິ່ງເປັນສ່ວນໜຶ່ງຂອງການດູແລກ່ອນເກີດຂອງທ່ານ.

ທ່ານສາມາດສົ່ງພະຍາດຕັບອັກເສບ B ໄປຫາເດັກເກີດໃຫມ່ຂອງທ່ານໃນເວລາເກີດໄດ້ ຖ້າທ່ານຕິດເຊື້ອ.

ຖ້າທ່ານຖືພາ ແລະ ເປັນພະຍາດຕັບອັກເສບ B, ລູກຂອງທ່ານສາມາດສັກຢາໄດ້ຕັ້ງແຕ່ຕອນເກີດເພື່ອປ້ອງກັນການຕິດເຊື້ອ.



## ສຳລັບຂໍ້ມູນເພີ່ມເຕີມ:

**Centers for Disease Control and Prevention (CDC, ສູນຄວບຄຸມ ແລະ ປ້ອງກັນພະຍາດ)**
www.cdc.gov/hepatitis/hbv/

**HepB MomsB**
www.hepbmoms.org (ພາສາອັງກິດ)

HepBHub
doh.wa.gov/hepbhub

DOH 420-406 May 2022 Lao
ເພື່ອຂໍເອົາເອກະສານນີ້ໃນຮູບແບບອື່ນ, ໃຫ້ໂທ 1-800-525-0127. ລູກຄ້າທີ່ຫູໜວກ ຫຼື ບໍ່ຄ່ອຍໄດ້ຍິນ, ກະລຸນາໂທ 711 (Washington Relay) ຫຼື ອີເມວຫາ civil.rights@doh.wa.gov.

ແຫຼ່ງຂໍ້ ມູນ: CDC, Protect Your Baby for Life



# ພະຍາດຕັບອັກເສບ B: ສິ່ງທີ່ທ່ານ ຈຳເປັນຕ້ອງຮູ້ ເພື່ອປ້ອງກັນຕົວທ່ານ ແລະ ລູກນ້ອຍຂອງທ່ານ

Washington State Department of Health



## ພະຍາດຕັບອັກເສບ B ເປັນອັນຕະລາຍຕໍ່ລູກນ້ອຍຂອງຂ້າພະເຈົ້າບໍ?

ເມື່ອເດັກນ້ອຍຕິດເຊື້ອພະຍາດຕັບອັກເສບ B, ເຂົາເຈົ້າມີໂອກາດປະມານ 90% ທີ່ຈະເກີດການຕິດເຊື້ອຊໍາເຮື້ອ ແລະ ຕະຫຼອດຊີວິດ.

ລະເລີຍໂດຍບໍ່ໄດ້ຮັບການປິ່ນປົວ, ເດັກນ້ອຍປະມານ 1 ໃນ 4 ຄົນທີ່ເປັນພະຍາດຕັບອັກເສບ B ຊໍາເຮື້ອຈະມີບັນຫາຕັບຮ້າຍແຮງເຊັ່ນ: ຕັບເສຍຫາຍ, ພະຍາດຕັບ, ຫຼື ເປັນມະເຮັງຕັບ.

ໂຊກດີ, ການຕິດເຊື້ອໄວຣັດຕັບອັກເສບ B ສາມາດປ້ອງກັນໄດ້ດ້ວຍ ວັກຊີນປ້ອງກັນທີ່ມີຄວາມີ່ປອດໄພ ແລະ ມີປະສິດທິພາບສູງ.

## ປົກປ້ອງລູກຂອງທ່ານ ແລະ ປ້ອງກັນພະຍາດຕັບອັກເສບ B

ລູກຂອງທ່ານຄວນໄດ້ຮັບວັກຊີນປ້ອງກັນຕັບອັກເສບ B ຄັ້ງທໍາອິດພາຍໃນ 24 ຊົ່ວໂມງຫຼັງເກີດ.

ຖ້າທ່ານມີຜົນກວດພະຍາດຕັບອັກເສບ B ເປັນບວກ, ລູກຂອງທ່ານຈະຕ້ອງໄດ້ຮັບ ຢາ globulin ຕ້ານທານຕັບອັກເສບ B (HBIG) ພາຍໃນ 12 ຊົ່ວໂມງ ຈາກການເກີດ.

ລູກຂອງທ່ານຕ້ອງສັກວັກຊີນປ້ອງກັນພະຍາດຕັບອັກເສບ B ທັງ 3 ຊະນິດ ແລະ ການສັກຢາ HBIG ເພື່ອປ້ອງກັນພະຍາດຕັບອັກເສບ B. ກວດພະຍາດໃຫ້ລູກຂອງທ່ານເມື່ອໄດ້ອາຍຸ 9–12ເດືອນເພື່ອຢືນຢັນວ່າລູກຂອງທ່ານໄດ້ຮັບການປ້ອງກັນບໍ.

| ວັນທີໝົດກໍານົດ: | ເດັກທີ່ເກີດຈາກຜູ້ຖືພາທີ່ເປັນໂຣກຕັບອັກເສບ B ຄວນໄດ້ຮັບການສັກຢາ |
|---|---|
| **ແຕ່ຕອນເກີດ** | ວັກຊີນປ້ອງກັນພະຍາດຕັບອັກເສບ B ຕອນເກີດ ແລະ ຢາ globulin ຕ້ານພະຍາດຕັບອັກເສບ B (HBIG) |
| **1–2 ເດືອນ** | ວັກຊີນປ້ອງກັນພະຍາດຕັບອັກເສບ B ຕອນເກີດເຂັມ 2 |
| **6 ເດືອນ** | ວັກຊີນປ້ອງກັນພະຍາດຕັບອັກເສບ B ຕອນເກີດເຂັມ 3 |
| **9–12 ເດືອນ** | ກວດເພື່ອຢືນຢັນວ່າລູກຂອງທ່ານໄດ້ຮັບການປ້ອງກັນບໍ |

ນີ້ແມ່ນວິທີອື່ນເພື່ອປ້ອງກັນລູກຂອງທ່ານ:

- ທ່ານຍັງສາມາດໃຫ້ນົມລູກຂອງທ່ານໄດ້ຫາກທ່ານເປັນພະຍາດຕັບອັກເສບ B. ລົມກັບທ່ານຫມໍຂອງທ່ານ ຖ້າຫາກທ່ານມີ ຫົວນົມທີ່ມີຮອຍແຕກ ແລະ ມີເລືອດອອກ, ມີທາງເລືອກ ເພື່ອຊ່ວຍທ່ານໃນຂະນະທີ່ທ່ານໃຫ້ນົມລູກ.
- ຮັກສາບັນທຶກການສັກວັກຊີນປ້ອງກັນຕັບອັກເສບ B ຂອງທ່ານໄວ້ ແລະ ຖືໄປພົບແພດ.
- ໃຫ້ສະມາຊິກໃນຄອບຄົວຂອງທ່ານໄປກວດ ແລະ ສັກຢາປ້ອງກັນພະຍາດຕັບອັກເສບ B.

## ຖ້າທ່ານບໍ່ມີ ພະຍາດຕັບອັກເສບ B

ທ່ານຍັງສາມາດປົກປ້ອງຕົນເອງ ແລະ ລູກຂອງທ່ານດ້ວຍຢາວັກຊີນທີ່ປອດໄພ ແລະ ມີປະສິດທິພາບ. ຢ່າລືມສັກຢາປ້ອງກັນໃຫ້ຄົບເຂັມ!

| ວັນທີໝົດກໍານົດ: | ລູກເກີດໃໝ່ຄວນໄດ້ຮັບການສັກຢາ |
|---|---|
| **ແຕ່ຕອນເກີດ** | ວັກຊີນປ້ອງກັນພະຍາດຕັບອັກເສບ B ຕອນເກີດ |
| **1–2 ເດືອນ** | ວັກຊີນປ້ອງກັນພະຍາດຕັບອັກເສບ B ຕອນເກີດເຂັມ 2 |
| **6 ເດືອນ** | ວັກຊີນປ້ອງກັນພະຍາດຕັບອັກເສບ B ຕອນເກີດເຂັມ 3 |

## ດູແລຕົວທ່ານເອງ ຖ້າທ່ານມີພະຍາດຕັບອັກເສບ B

ທ່ານອາດຈະຕ້ອງກວດເພີ່ມເຕີມເພື່ອກວດເບິ່ງສຸຂະພາບຕັບຂອງທ່ານ ແລະ ເບິ່ງວ່າທ່ານຕ້ອງມີການປິ່ນປົວບໍ.

ຢາທີ່ເອີ້ນວ່າຢາຕ້ານໄວຣັດ, ສາມາດປິ່ນປົວຄົນທີ່ມີພະຍາດຕັບອັກເສບ B. ແນວໃດກໍ່ຕາມ, ບໍ່ແມ່ນທຸກຄົນທີ່ຕ້ອງມີການປິ່ນປົວ.

ຖາມທ່ານຫມໍກ່ອນທີ່ຈະກິນຢາຕາມໃບສັ່ງແພດ, ຢາທີ່ຊື້ຕາມຮ້ານ, ອາຫານເສີມ, ຫຼື ວິຕາມິນເພາະວ່າຢາບາງຊະນິດສາມາດທໍາລາຍຕັບໄດ້.

ທ່ານອາດຈະໄດ້ຮັບຜົນປະໂຫຍດຈາກວັກຊີນປ້ອງກັນຕັບອັກເສບ A. ສືບຕໍ່ໄປພົບແພດຫຼັງຈາກການເກີດລູກເພື່ອຕິດຕາມການຕິດເຊື້ອຂອງທ່ານ.